ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະລາດ ວັດທະນະຖາວອນ

¤¤ ¤¤ ¤¤ ¤¤ ¤¤

ແຂວງບໍລິຄຳໄຊ

002

ເລກທີ.................../ ຂບຊ

ປາກຊັນ, ວັນທີ 04 FEB 2014

# ຄຳສັ່ງ

## ວ່າດ້ວຍການເພີ່ມທະວີວຽກງານ ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ

**ເຖິງ:** ບັນດາພະແນກການ, ຫ້ອງການທຽບເທົ່າ, ກອງບັນຊາການ ປກຊ - ປກສ ແລະ ບັນດາເມືອງທົ່ວແຂວງບໍລິຄຳໄຊ.

- ອີງຕາມ: ຄຳສັ່ງຂອງລັດຖະມົນຕີ ວ່າການກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 1470 / ປກສ; ລົງວັນທີ 11 / 11 / 2013 ວ່າດ້ວຍການເພີ່ມທະວີວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ.
- ອີງຕາມ: ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 27 / ນຍ; ລົງວັນທີ 05 ຕຸລາ 2011 ແລະ ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 22 / ຄລສພ; ລົງວັນທີ 10 ສິງຫາ 2012 ວ່າດ້ວຍການເພີ່ມທະວີ ການສະກັດກັ້ນ ແລະ ຕ້ານຢາເສບຕິດ.
- ອີງຕາມ: ແຜນຍຸດທະສາດສະກັດກັ້ນ ແລະ ຕ້ານປະກົດການຫຍໍ້ທໍ້ໃນສັງຄົມປະຈຳປີ 2013.

ອີງໃສ່ສະພາບການປະກົດການຫຍໍ້ທໍ້ໃນສັງຄົມ ປະຈຸບັນເຫັນວ່າມີຫຼາຍເຫດການ ມີທ່າອ່ຽງເພີ່ມຂຶ້ນ, ມີຜົນກະທົບຢູ່ຫຼາຍຂົງເຂດ ແລະ ມີລັກສະນະກວ້າງຂວາງ, ແຊກຊ້ອນເຂົ້າໃນຂົງເຂດຖັນແຖວພະນັກງານວິຊາການ, ພະນັກງານນຳພາ-ບັນຊາ ເປັນຕົ້ນບັນຫາຢາເສບຕິດ, ປຸ້ນຈີ້, ຊິງຊັບ, ໃຊ້ອາວຸດ, ສະຖານທີ່ມົ້ວສຸມ, ໄພສັງຄົມ, ການຄ້າມະນຸດ, ໂສເພນີ, ທັງພາຍໃນ ແລະ ຕ່າງປະເທດ, ຊາວຕ່າງດ້າວສ້າງຄອບຄົວບໍ່ຖືກຕ້ອງ, ແຮງງານຕ່າງປະເທດເຂົ້າມາບໍ່ຖືກຕ້ອງ, ການສໍ້ລາດບັງຫຼວງ, ຜ່ານມາພວກເຮົາກໍ່ໄດ້ສຸມໃສ່ສະກັດກັ້ນ ແລະ ແກ້ໄຂດ້ວຍຫຼາຍວິທີຢ່າງຕັ້ງໜ້າ, ແຕ່ເຫັນວ່າຍັງມີຫຼາຍໆເຫດການ ທີ່ສົ່ງຜົນກະທົບເຖິງຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ, ກີດໜ່ວງຖ່ວງດຶງການພັດທະນາເສດຖະກິດ-ສັງຄົມຂອງຊາດ, ສົ່ງຜົນກະທົບຕໍ່ບົດບາດສິດທິຜົນ ການນຳພາຂອງພັກ-ລັດ ແລະ ກຳລັງ ປກຊ - ປກສ ເຊິ່ງພາເປັນເງື່ອນໄຂໃຫ້ອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີຈະນຳເອົາບັນຫາດັ່ງກ່າວເປັນຂໍ້ອ້າງ ໃນການສ້າງສະຖານະການທາງດ້ານການເມືອງ, ໂຄສະນາບິດເບືອນໄປໃນທາງທີ່ບໍ່ດີ ຕໍ່ການນຳພາຂອງພັກ, ຕໍ່ການຄຸ້ມຄອງຂອງລັດ, ຄຸ້ມຄອງສັງ

ຄົມ, ສວຍໂອກາດແຊກຊຶມເຂົ້າຫາພະນັກງານນຳພາ-ບັນຊາ ຢູ່ບາງຂົງເຂດທີ່ເປັນເປົ້າໝາຍ ແລະ ຜົນປະໂຫຍດຂອງເຂົາດ້ວຍຫຼາຍຮູບການ ໃນຂະນະທີ່ພະນັກງານ, ວິຊາການ, ຜູ້ນຳພາ-ບັນຊາບໍ່ເຂັ້ມງວດ.

ເພື່ອເຮັດໃຫ້ການດຳເນີນກອງປະຊຸມໃຫຍ່ 03 ຂັ້ນ, ການສະເຫຼີມສະຫຼອງສອງວັນປະຫວັດສາດ ແລະ ກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ເປັນພື້ນຖານໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ປະສົບຜົນສຳເລັດຕາມຄາດໝາຍ ທີ່ພັກ-ລັດໄດ້ກຳນົດເອົາໄວ້, ບັນຍາກາດງານບຸນຕ່າງໆ ຂອງຊາດ, ຂອງພັກ ແລະ ກອງປະຊຸມໃຫຍ່ຕ່າງໆ ຕ້ອງຮັບປະກັນໄດ້ 100 %.

## ເຈົ້າແຂວງ - ແຂວງບໍລິຄຳໄຊ ອອກຄຳສັ່ງ:

1. ໃຫ້ບັນດາພະແນກການ, ຫ້ອງການທຽບເທົ່າ, ກອງບັນຊາການ ປກຊ - ປກສ ແລະ ບັນດາເມືອງໃນທົ່ວແຂວງ ເປີດຂະບວນການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ຢູ່ພາຍໃນຂອງຕົນຢ່າງເປັນເຈົ້າການ ໂດຍເລີ່ມແຕ່ການໂຄສະນາ ເພື່ອປູກຈິດສຳນຶກ, ການສຶກສາອົບຮົມປະຊາຊົນ, ຊາວໜຸ່ມທີ່ຫວ່າງງານຢູ່ບ້ານ, ເມືອງ, ພະນັກງານລັດຖະກອນ, ສຳນັກງານອົງການ, ໂຮງຮຽນ, ໂຮງໝໍ, ຫົວໜ່ວຍທຸລະກິດ, ຜ່ານທາງໂທລະພາບ, ໜັງສືພິມ, ວິທະຍຸ ແລະ ຊື່ມວນຊົນ ແຕ່ລະຂັ້ນ ເພື່ອໂຄສະນາສິ່ງທີ່ດີງາມ, ຕຳນິວິຈານສິ່ງທີ່ບໍ່ດີ, ການເຜີຍແຜ່ຕ້ອງໃຫ້ທົ່ວເຖິງ ຕະຫຼອດຮອດອຳນາດການປົກຄອງບ້ານ ແລະ ຄອບຄົວ ເພື່ອໃຫ້ທຸກຄົນ, ທຸກພາກສ່ວນ ຕ້ອງມີສ່ວນຮ່ວມເຮັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.
2. ຄະນະພັກ-ຄະນະນຳຢູ່ແຕ່ລະພະແນກ, ແຕ່ລະເມືອງ ຕ້ອງເອົາໃຈໃສ່ລົງຊີ້ນຳຢ່າງທົ່ວເຖິງ ແລະ ໃກ້ຊິດ, ຕ້ອງເຮັດວຽກຕາມໜ້າທີ່, ສິດ ແລະ ພາລະບົດບາດຂອງຕົນດ້ວຍຄວາມຮັບຜິດຊອບ ແລະ ເຄັ່ງຄັດ, ຜູ້ນຳພາ-ບັນຊາຕ້ອງມີການກວດກາ, ຮັບປະກັນຄວາມສັດຊື່ບໍລິສຸດຂອງພະນັກງານ ຕໍ່ຂັ້ນເທິງ, ຫຼີກລ້ຽງບໍ່ໃຫ້ມີປະກົດການຫຍໍ້ທໍ້ໃນຖັນແຖວພະນັກງານ-ລັດຖະກອນ.
3. ກອງບັນຊາການ ປກຊ - ປກສ ແຂວງ ຕ້ອງເປັນເຈົ້າການຊີ້ນຳບັນດາກອງບັນຊາການ ປກຊ - ປກສ ເມືອງ ແລະ ກົມກອງວິຊາສະເພາະ ຕ້ອງມີຄວາມຮັບຜິດຊອບວຽກງານຂອງໃຜລາວ ໃຫ້ເຂັ້ມແຂງ, ບ່ອນໃດມີຄວາມຈຳເປັນໃນການເພີ່ມກຳລັງ ຕ້ອງສົ່ງກຳລັງລົງໄປສົມທົບ ເພື່ອເປັນກຳລັງແຮງເຮັດວຽກງານວິຊາສະເພາະສະກັດກັ້ນ ແລະ ແກ້ໄຂ ເຮັດໃຫ້ສະພາບໃນສັງຄົມມີຄວາມສະຫງົບ.
4. ວຽກງານຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ໃຫ້ພາກສ່ວນກ່ຽວຂ້ອງ( ຫ້ອງການພັດທະນາຊົນນະບົດ ) ຕ້ອງເປັນໃຈກາງ ເອົາໃຈໃສ່ຕິດພັນກັບວຽກງານ 03 ສ້າງ, ຂົງເຂດ ປກສ ຕ້ອງເໜັ້ນໜັກ ບັນດາ ປກສ ເມືອງ, ປັບປຸງຄຸນນະພາບການເຮັດວຽກງານຂອງ ປກສ ກຸ່ມບ້ານ ແລະ ປກສ ບ້ານ ຕ້ອງເຮັດວຽກຕາມສິດໜ້າທີ່ຂອງຕົນຢ່າງເຂັ້ມງວດ.
5. ປກສ ແຂວງ ແລະ ບັນດາ ປກສ ເມືອງ ໃຫ້ສຸມໃສ່:
   5.1. ໃຫ້ຄົ້ນຄ້ວາ, ປັບປຸງວຽກງານວິຊາສະເພາະສືບຂ່າວ, ຕ້ານສືບຂ່າວໃຫ້ດີ ທ່ວງທັນກັບສະພາບການ, ແກ້ໄຂເປົ້າໝາຍໃຫ້ຖືກຕ້ອງກັບຕົວຈິງ, ມີຄວາມຮັບຜິດຊອບສູງ, ຜູ້ນຳພາ-ບັນຊາທຸກສະຫາຍຕ້ອງລົງເລິກໃກ້ສິດຕິດແທດ ຊີ້ນຳເປັນປົກກະຕິໃນການປະຕິບັດໜ້າທີ່ວຽກງານ ຂອງພະນັກງານທຸກສະຫາຍ.

5.2. ວຽກງານສັນຕິບານ ຕ້ອງຊີ້ນຳວຽກງານຄຸ້ມຄອງຄົນຕ່າງປະເທດ, ຕຳຫຼວດທອງທ່ຽວ, ວຽກງານຄຸ້ມຄອງສຳມະໂນຄົວ ແລະ ປກສ ບ້ານ. ກອງບັນຊາການ ປກສ ແຂວງ ໃຫ້ສືບຕໍ່ແກ້ໄຂຄົນຕ່າງປະເທດ ທີ່ມາລັກແຕ່ງງານ, ອອກແຮງງານ, ຄ້າປະເວນີ, ເຄື່ອນໄຫວລັກ-ປຸ້ນຈີ້ ພ້ອມທັງມີການກວດກາ ແລະ ແກ້ໄຂການຂຶ້ນສຳມະໂນຄົວ ໃຫ້ຄົນຕ່າງປະເທດ ທີ່ບໍ່ຖືກຕ້ອງຢ່າງເດັດຂາດ.

5.3. ວຽກງານປ້ອງກັນເຄື່ອນທີ່, ຈະລາຈອນ ໃຫ້ມີການຈັດຕັ້ງເຄື່ອນໄຫວວາງກຳລັງ ເພື່ອແກ້ໄຂກຸ່ມແກ້ງກວນເມືອງ, ແຂ່ງລົດກາງຄືນ, ກຸ່ມນັກເລງອັນຕະພານ, ກວດກາພາຫະນະຂົນສົ່ງສິນຄ້າທຸກປະເພດ ໃນເວລາກາງຄືນ, ການດັດແປງສະພາບເຕັກນິກລົດ ແລະ ອື່ນໆ ໃຫ້ຫຼຸດລົງຢ່າງຂາດຕົວ ນັບແຕ່ຢູ່ແຂວງ ລົງຮອດບັນດາເມືອງ.

5.4. ຄະນະແກ້ໄຂປະກົດການຫຍໍ້ທໍ້ຂັ້ນແຂວງ ທີ່ໄດ້ແຕ່ງຕັ້ງໄປແລ້ວນັ້ນ ຕ້ອງໄດ້ສືບຕໍ່ເຄື່ອນໄຫວສົມທົບກັບພາກສ່ວນທີ່ກ່ຽວຂ້ອງຢ່າງກົມກຽວ ເຮັດໃຫ້ການແກ້ໄຂປະກົດການຫຍໍ້ທໍ້ ກາຍເປັນຂອງທຸກພາກສ່ວນ, ເປັນຂອງໝົດທຸກຄົນໃນສັງຄົມ.

6. ໂດຍອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 13/ນຍ; ລົງວັນທີ 11 ມິຖຸນາ 2012 ວ່າດ້ວຍການໂຈະພິຈາລະນາ ແລະ ອານຸຍາດໂຄງການລົງທຶນໃໝ່ ສຳລັບການຂຸດຄົ້ນ ແລະ ສຳຫຼວດແຮ່ທາດ, ການປູກຢາງພາລາ ແລະ ໄມ້ວິກໃນຂອບເຂດທົ່ວປະເທດ, ເວົ້າສະເພາະພາຍໃນແຂວງບໍລິຄຳໄຊ ຖ້າຍັງມີຜູ້ດື້ດ້ານ ບໍ່ປະຕິບັດຕາມຄຳສັ່ງຂອງແຂວງ ແລະ ເມືອງ ໃນການຢຸດເຊົາ ຕ້ອງໄດ້ດຳເນີນມາດຕະການທາງດ້ານກົດໝາຍ ຢ່າງເຂັ້ມງວດ ແລະ ຕາມຂະບວນການຍຸຕິທຳ.

7. ບັນດາພະແນກການ, ຫ້ອງການທຽບເທົ່າ, ບັນດາເມືອງໃນທົ່ວແຂວງ ເມື່ອໄດ້ຮັບຄຳສັ່ງນີ້ແລ້ວ ຕ້ອງໄດ້ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ ໂດຍແມ່ນຄະນະຮັບຜິດຊອບແກ້ໄຂປະກົດການຫຍໍ້ທໍ້ຂັ້ນແຂວງເປັນໃຈກາງ ເພື່ອໃຫ້ບັນດາພະແນກ, ກອງບັນຊາການ ປກຊ - ປກສ, ບັນດາເມືອງ ໄດ້ມີຄຳສັ່ງຈັດຕັ້ງປະຕິບັດ ຢູ່ຂັ້ນຂອງຕົນຮັບຜິດຊອບຢ່າງເຂັ້ມງວດ ພ້ອມລາຍງານສະພາບ ການຈັດຕັ້ງປະຕິບັດແຕ່ລະດ້ານໃຫ້ແຂວງ ເປັນແຕ່ລະໄລຍະ.

<u>ເຈົ້າແຂວງ - ແຂວງບໍລິຄຳໄຊ</u>

ປານ ນ້ອຍມະນີ

Pan NOYMANY